# ວັນໃກ້ຊິ້ນຮັກ

ໂດຍ: ບ່າວຫຼັກເຈັດ

ຮູ້ສຶກດີ ວ່າຮັກນີ້ ເຖິງຄາວຈາກ
ເມື່ອຄົນຮັກ ມີຊາຍອື່ນ ຊື່ນຊົມໃຈ
ຮັກເຄີຍຫວັງ ຕ້ອງກັບພັງ ເລືອນລາງໄປ
ເຈັບຫົວໃຈ ໃນຮັກເຮົາ ເຂົາເຊີຍຊົມ

ທຸ້ມເທໃຈ ມອບຮັກໄວ້ ໃຫ້ເຂົາຫມົດ
ຈິດຮັນທົດ ຫມົດອາລັຍ ໃຈຊື່ນຊົມ
ໂອ້ຮັກເຮົາ ເຝົ້າຄອງຄອຍ ພອຍຊ້ຳຕຮົມ
ຮ້າວຮະບົມ ພົມລິຂິດ ປິດເສັ້ນທາງ

ນາງລືມຮັກ ລືມສັນຍາ ທີ່ເຄີຍໃຫ້
ນ້ອງປ່ຽນໄປ ໃຈເຫຫັນ ພລັນເມີນຫມາງ
ສຸດປວດຮ້າວ ເສົ້າໃຈຫນັກ ຮັກຈືດຈາງ
ຮູ້ວ່ານາງ ແບ່ງຫົວໃຈ ໃຫ້ອີກຄົນ

ພົມລິຂິດ ຊ່າງຂີດເສັ້ນ ເຫຼັ້ນຕລົກ
ເຂົາຫັກອົກ ເຮັດໃຫ້ເຮົາ ເສົ້າຫມອງຫມົ່ນ
ເຂົາທຳຮາຍ ອ້າຍກ້ຳກືນ ຕອ້ງຝືນທົນ
ເຂົາເປັນຄົນ ມີຫຼາຍມັກ ຮັກຫຼາຍໃຈ

ຫຼົງວ່າໄດ້ ຮັກຄັ້ງກ່ອນ ຍ້ອນອະດີດ
ອ້າຍຫຼົງຄິດ ວ່ານ້ອງຮັກ ປັກຈຸດຫມາຍ
ເຮົາທັງສອງ ຄອງຊື່ນຊອບ ມອບຫົວໃຈ

ແລ້ວເຫດໃດ  ນ້ອງມາຈາກ  ຮັກລາງເລືອນ

ສ້າງກຸສົລ  ຜົລບຸນສົ່ງ  ຄືງເທົ່ານີ້
ຈຶ່ງເຫຼືອມີ  ພຽງສຳຣວມ  ຄວາມເປັນເພື່ອນ
ປະເພນີ  ຄອຍບົ່ງຊີ້  ຄອຍຢ້ຳເຕືອນ
ຄຳວ່າເພື່ອນ  ຄຳນີ້ຫນາ  ພາຫມົ່ນຫມອງ

ນ້ອງພົບຮັກ  ນາງພົບຫວັງ  ອີກຄັ້ງໃຫມ່
ເຂົາຄືຊາຍ  ທີ່ນ້ອງຕັ້ງ  ຫວັງຄຽງຄອງ
ຊາຍຮູບງາມ  ພ້ອມສັກສີ  ທີ່ຫມາຍປອງ
ເຂົາທັງສອງ  ຊ່າງພຽງພໍ  ເຫມາະສົມກັນ

ນ້ອງຢາກມີ  ກຽຕຊື່ສຽງ  ກ້ອງກຽງໃກ
ເຂົາພົບຊາຍ  ຖານະດີ  ທີ່ໃຝ່ຝັນ
ຕ່າງຢາກມີ  ຊື່ສຽງດັງ  ຄຽງຄູ່ກັນ
ຂໍໃຫ້ຝັນ  ທີ່ຫມັ້ນຄືງ  ຈຶ່ງເປັນຈິງ

ບໍ່ໂກດຮ້າຍ  ຫຼືຕຳນິ  ຕິເຈົ້າດອກ
ຂໍພຽງບອກ  ຄວາມໃນໃຈ  ໄຂຄວາມຈິງ
ຈະຈົດຈຳ  ຈົນວັນຕາຍ  ໄວ້ທຸກສິ່ງ
ນ້ອງຄືຍິງ  ທີ່ອ້າຍຮັກ  ອ້າຍປາຖນາ

ຂໍອ່ວຍພອນ  ດວງສມອນ  ຈົ່ງມີສຸຂ
ຢ່າມີທຸກ  ຫຼືໂສກເສົ້າ  ເຫງົາອຸຣາ
ຂໍຫຼີກທາງ  ເພື່ອຄວາມສຸຂ  ນ້ອງຂ້າງຫນ້າ
ສຸດບູຊາ  ຢ່າຄິດຄ້ອຍ  ເສົ້າຫງອຍເຫງົາ

ຈິ່ງໄປດີ ພົບສຸຂຂີ ເຖີດຍອດຮັກ
ເພື່ອປັກຫຼັກ ໄດ້ຮ່ວມຮຽງ ຄຽງຄູ່ເຂົາ
ສ່ວນອ້າຍເອງ ແມ່ນຫມອງຫມົ່ນ ຈະທົນເອົາ
ຄອງຄວາມເສົ້າ ອ້າຍເຄີຍຊິນ ຢ່າງເຊັ່ນເຄີຍ

ຂໍພຽງນ້ອງ ບອກໂດຍດີ ມີຊາຍອື່ນ
ຈົ່ງຢ່າຝືນ ໃຫ້ເອີ່ຍໄຂ ໃຈເປີດເຜີຍ
ແມ່ນຜິດຫວັງ ຫຼືຖືກຫຼອກ ບອກມາເລີຍ
ຮັກເຫນືອເອີ່ຍ ຂໍຄິດຮອດ ຕລອດໄປ....